ບໍລິສັດ ສຸວັນນີ ໂຮມເຊັນເຕີ ເຂົ້າຮ່ວມງານວາງສະແດງສິນຄ້າ ແລະ ນະວັດຕະກຳດ້ານສະຖາປັດຕະຍະກຳ ວິສະວະກຳ ວັດສະດຸກໍ່ສ້າງ ແລະ ພູມີສະຖາປັດປະຈຳປີຂອງ ສສວ

ຫລື "ALACE EXPO 2026"

ພາຍໃຕ້ຫົວຂໍ້ງານ: "ຍືນຍົງນິຍົມ - SUSTAINISM"

ໃນວັນທີ 21 ກັນຍາ 2026 ທີ່ຜ່ານມາ, ທ່ານ ງາມປະສົງ ເມືອງມະນີ ຮອງລັດຖະມົນຕີກະຊວງໂຍທາທິການ ແລະຂົນສົ່ງ ໄດ້ໃຫ້ກຽດເຂົ້າຮ່ວມເປີດງານວາງສະແດງສິນຄ້າປະຈຳປີ "ALACE EXPO 2026" ຢ່າງເປັນທາງການ, ເຊິ່ງຈັດຂຶ້ນພາຍໃຕ້ຫົວຂໍ້ "ຍືນຍົງນິຍົມ — SUSTAINISM". ໃນໂອກາດນີ້, ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ຮ່ວມເປັນໜຶ່ງໃນຜູ້ສະໜັບສະໜຸນຫຼັກ ແລະ ໄດ້ນຳເອົານະວັດຕະກຳສິນຄ້າວັດສະດຸກໍ່ສ້າງ ແລະ ຕົກແຕ່ງບ້ານເຂົ້າຮ່ວມວາງສະແດງ ເພື່ອຕອບໂຈດທ່າອ່ຽງການກໍ່ສ້າງ ແລະ ການອອກແບບໃນຍຸກປັດຈຸບັນ.

ພາຍໃນບູ໊ດຂອງ ສຸວັນນີ ໂຮມເຊັນເຕີ ໄດ້ມີການວາງສະແດງສິນຄ້າທີ່ໂດດເດັ່ນດ້ານນະວັດຕະກຳທີ່ທັນສະໄໝ ປະກອບມີ: ກຸ່ມສຸຂະພັນອັດສະລິຍະ (Smart Toilet) ແລະ ກຸ່ມນະວັດຕະກຳກະໂລ້ຄຸນນະພາບສູງ ໄດ້ແກ່: ກະໂລ້ຂະໜາດໃຫຍ່ພິເສດ 90x180 cm, ກະໂລ້ທີ່ມີຄວາມໜາພິເສດເຖິງ 12 mm, ກະໂລ້ປະເພດ Full Body ທີ່ເປັນເນື້ອດຽວກັນທັງໝົດແຜ່ນ ແລະ ກະໂລ້ Double Loading ທີ່ໃຊ້ນະວັດຕະກຳການເຄືອບໜ້າພິເສດ (ປະກອບດ້ວຍຊັ້ນໜ້າ 30% ແລະ ຊັ້ນເນື້ອ 70%). ນອກຈາກນີ້, ຍັງມີກະໂລ້ລາຍຫີນອ່ອນທີ່ຜ່ານການເຄືອບໜ້າເຖິງ 7 ຊັ້ນ ເຊິ່ງກວມເອົາຊັ້ນເມັດສີ ແລະ ຊັ້ນເຄືອບສີທົນທານ ຊ່ວຍປ້ອງກັນຮອຍຂີດຂ່ວນໄດ້ເປັນຢ່າງດີ.



ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.

- ເບີໂທ: 021 561111
- ອີເມວ: Souvanny@souvanny.la
- App: Souvanny Retail App
- ເບີ What apps: (+856-20) 96 935 223
- ເວັບໄຊ: www.souvanny.la
- Facebook: Souvanny Home Center

ບໍລິສັດ ສຸວັນນີ ໂຮມເຊັນເຕີ ມີຄວາມພາກພູມໃຈຢ່າງຍິ່ງທີ່ໄດ້ຮ່ວມເປັນໜຶ່ງໃນຜູ້ສະໜັບສະໜູນຂອງງານໃນຄັ້ງນີ້ ແລະ ຂໍສະແດງຄວາມຂອບໃຈມາຍັງ ສະມາຄົມສະຖາປະນິກ ແລະ ວິສະວະກອນໂຍທາລາວ (ສສວ) ທີ່ໄດ້ມອບໂອກາດໃຫ້ທາງບໍລິສັດໄດ້ມີສ່ວນຮ່ວມໃນການສົ່ງເສີມວົງການສະຖາປັດຕະຍະກຳ ແລະ ວິສະວະກຳຂອງ ລາວ.

ພ້ອມດຽວກັນນີ້, ທາງບໍລິສັດ ຈຶ່ງຂໍຮຽນເຊີນມວນຊົນ, ນັກທຸລະກິດ, ສະຖາປະນິກ ແລະ ຜູ້ທີ່ສົນໃຈທຸກ ທ່ານ ເຂົ້າຮ່ວມຊົມ ແລະ ສຳຜັດປະສົບການຕົວຈິງກັບນະວັດຕະກຳໃໝ່ໆ ໄດ້ທີ່ບູ໊ດຂອງ ສຸວັນນີ ໂຮມເຊັນເຕີ ໃນ ງານ ALACE EXPO 2026. ງານດັ່ງກ່າວແມ່ນຈັດຂຶ້ນໃນລະຫວ່າງວັນທີ 19-25 ກັນຍາ 2026 ນີ້ ທີ່ ສູນ ວາງສະແດງສິນຄ້າ ລາວ-ໄອເຕັກ (ຕຶກເກົ່າ), ນະຄອນຫຼວງວຽງຈັນ.

#alace2026 #souvannyhomecenter #ສຸວັນນີໂຮມເຊັນເຕີ #ສະຖາປານິກລາວ #ສສວ





ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງບໍລິສັດ.

- ເບີໂທ: 021 561111
- ອີເມວ: Souvanny@souvanny.la
- App: Souvanny Retail App
- ເບີ What apps: (+856-20) 96 935 223
- ເວັບໄຊ: www.souvanny.la
- Facebook: Souvanny Home Center